ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

pwc

ເອກະສານລາຍງານການເງິນກາງປີ ໂດຍຫຍໍ້ (ທີ່ບໍ່ໄດ້ກວດສອບ)
ສຳລັບຮອບເວລາລາຍງານ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2016

www.pwc.com/la

pwc

ບົດລາຍງານຂອງຜູ້ກວດສອບອິດສະລະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ສະເໜີຕໍ່ສະພາບໍລິຫານ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ພວກເຮົາໄດ້ກວດກາ ທົບທວນຄືນ ໃບສະຫລຸບຊັບສົມບັດຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໃນວັນທີ 30 ມິຖຸນາ 2016 ແລະ ເຊິ່ງລວມເຖິງ ໃບລາຍງານຜົນໄດ້ຮັບ ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງຂອງຜູ້ຖືຮຸ້ນ ແລະ ໃບລາຍງານ ກະແສເງິນສົດ ສຳລັບໄລຍະການບັນຊີ 6 ເດືອນຕົ້ນປີ ຂອງປີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ຜູ້ບໍລິຫານຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ໃນເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງ ເອກະສານລາຍງານການເງິນປະຈຳປີ.ຄວາມຮັບຜິດຊອບຂອງພວກເຮົາແມ່ນອອກບົດລາຍງານ ເພື່ອສະແດງ ຄວາມເຫັນ ຕໍ່ ເອກະສານລາຍງານການເງິນລວມໂດຍຫຍໍ້ ບົນພື້ນຖານການກວດກາ ທົບທວນຄືນຂອງພວກເຮົາ.

ຂອບເຂດ ຂອງການກວດສອບ

ພວກເຮົາໄດ້ດຳເນີນການກວດກາ ທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410, ການທົບທວນຄືນ ວິທີການກວດກາ ທົບທວນຄືນຕາມມາດຕະຖານສະບັບນີ້ ກຳນົດໃຫ້ລວມມີ: ການສອບຖາມ ບຸກຄະລາກອນຂອງກິດຈະການ, ບຸກຄົນຜູ້ຮັບຜິດຊອບ ຕໍ່ຝ່າຍບັນຊີ ແລະ ການເງິນ, ດຳເນີນການວິໄຈຂໍ້ມູນ, ດ້ານການເງິນທີ່ ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນ ໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ, ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບສາກົນ. ເພາະສະນັ້ນ ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອ ໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບແກ່ພວກເຮົາໄດ້. ດັ່ງນັ້ນ ພວກເຮົາບໍ່ໄດ້ສະແດງຄວາມເຫັນ.

ວັກເນັ້ນ

ໂດຍທີ່ພວກເຮົາບໍ່ໄດ້ມີເງື່ອນໄຂໃນການອອກຄຳເຫັນ, ພວກເຮົາໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 16 ໃນເອກະສານ ລາຍງານການເງິນສະບັບນີ້ ເຊິ່ງໄດ້ອະທິບາຍເຫດການຫຼັງຈາກມື້ອອກບົດລາຍງານກ່ຽວກັບການຂາຍສິດທິເປັນຕົວແທນ ຂາຍລິບແລະບັນໃດເລື່ອນຍີ່ຫໍ້ Mitsubishi ເຊິ່ງໄລຍະເວລາແລະເງື່ອນໄຂທີ່ກ່ຽວຂ້ອງກຳລັງຢູ່ໃນຂັ້ນຕອນການ ສະຫລຸບ.

ສະຫລຸບ

ບົນພື້ນຖານ ການກວດກາ ທົບທວນຄືນຂອງພວກເຮົາ, ບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານ ການເງິນ ດັ່ງກ່າວ ບໍ່ສະໜອງຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືໄດ້ວ່າມີຄວາມສຳຄັນຫຼາຍ, ຕາມຫຼັກການບັນຊີຂອງ ບໍລິສັດ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີ ສ໌ (ລາວ) ຈຳກັດຜູ້ດຽວ.

ທ່ານ ໄພບູນ ຕັນກຸນ
ຜູ້ຖືຮຸ້ນ
ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 9 ກັນຍາ 2016

	ບິດ ອະທິບາຍ	ທີບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	58.264.355.338	96.575.616.427
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	42.546.103.320	28.794.539.438
ເຄື່ອງໃນສາງ , ສຸດທິ	6	100.259.682.367	73.244.828.356
ຊັບສິນໝຸນວຽນອື່ນໆ		4.077.829.438	3.070.175.100
ລວມຊັບສິນໝຸນວຽນ		205.147.970.463	201.685.159.321
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	7	329.898.946.613	320.523.942.056
ລວມຊັບສິນບໍ່ໝຸນວຽນ		329.898.946.613	320.523.942.056
ລວມຊັບສິນ		**535.046.917.076**	**522.209.101.377**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ອັດທາມາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ໜີ້ສິນ ແລະ ທຶນຕົນເອງ			
ໜີ້ສິນໝຸນວຽນ			
ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	32.783.644.975	26.105.097.350
ສ່ວນຂອງເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	9	252.010.000	252.957.748
ໜີ້ຕ້ອງສົ່ງອາກອນ ກຳໄລ	10	645.142.139	4.171.949.502
ໜີ້ສິນໝຸນວຽນອື່ນໆ		29.211.304.946	25.729.291.057
ລວມໜີ້ສິນໝຸນວຽນອື່ນ		62.892.102.060	56.259.295.657
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	9	738.585.987	885.352.182
ລວມໜີ້ສິນບໍ່ໝຸນວຽນ		738.585.987	885.352.182
ລວມໜີ້ສິນ		63.630.688.047	57.144.647.839
ທຶນຂອງຜູ້ຖືຮຸ້ນ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ຈັດສັນ - ສຳຮອງຕາມກົດໝາຍ	10	2.535.416.806	2.092.819.578
ຈັດສັນ - ສຳຮອງອື່ນໆ	10	2.285.416.806	1.842.819.578
ບໍ່ໄດ້ຈັດສັນ		147.537.210.486	151.300.105.001
ດັດແກ້ຈາກການແປງຄ່າ		(35.677.539.791)	(44.907.015.341)
ລວມທຶນ ຂອງຜູ້ຖືຮຸ້ນ		116.680.504.307	465.064.453.538
ລວມໜີ້ສິນ ແລະ ທຶນຕົນເອງ		**535.046.917.076**	**522.209.101.377**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ອັດຕາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

	30 ມິຖຸນາ 2016 ກີບ
ລາຍໄດ້ຈາກການຂາຍ	60.229.851.543
ລາຍໄດ້ຈາກການບໍລິການ	20.449.651
ຕົ້ນທຶນໃນການຂາຍ	(52.795.639.193)
ຕົ້ນທຶນໃນການບໍລິການ	(24.386.492)
ກຳໄລລວມຂັ້ນຕົ້ນ	**7.430.275.509**
ລາຍຮັບອື່ນໆ	631.848.283
ລາຍຈ່າຍໃນການຂາຍ	(607.705.183)
ລາຍຈ່າຍບໍລິຫານ	(7.141.852.790)
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ ສຸດທິ	473.884.258
ກຳໄລ ກ່ອນຈ່າຍອາກອນກຳໄລ	**786.450.077**
ອາກອນກຳໄລ	(27.180.007)
ກຳໄລສຸດທິສຳລັບງວດ	**759.270.070**
ກຳໄລຕໍ່ຮຸ້ນ	
ພື້ນຖານກຳໄລຕໍ່ຮຸ້ນ	5

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດທາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

	ບິດ ອະທິບາຍ	30 ມິຖຸນາ 2016 ກີບ	30 ມິຖຸນາ 2015 ກີບ
ລາຍໄດ້ຈາກການຂາຍ		141.179.710.374	166.475.180.907
ລາຍໄດ້ຈາກການບໍລິການ		398.115.301	1.368.229.691
ຕົ້ນທຶນໃນການຂາຍ		(124.439.518.062)	(145.932.810.528)
ຕົ້ນທຶນໃນການບໍລິການ		(351.142.996)	(81.605.358)
ກຳໄລລວມຂັ້ນຕົ້ນ		**16.787.164.617**	**21.828.994.712**
ລາຍຮັບອື່ນໆ		1.267.836.447	919.917.340
ລາຍຈ່າຍໃນການຂາຍ		(866.826.678)	(601.451.966)
ລາຍຈ່າຍບໍລິຫານ		(11.803.326.030)	(9.303.333.033)
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ ສຸດທິ		(315.910.830)	(337.229.306)
ກຳໄລ ກ່ອນຈ່າຍອາກອນກຳໄລ		**5.068.937.526**	**12.506.897.747**
ອາກອນກຳໄລ	12	(642.965.245)	(321.062.908)
ກຳໄລສຸດທິສຳລັບງວດ		**4.425.972.281**	**12.185.834.839**
ກຳໄລຕໍ່ຮຸ້ນ			
ພື້ນຖານກຳໄລຕໍ່ຮຸ້ນ	13	27	-

ອັດທາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໄມລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ບໍລິສັດ ສຸວັນນີ ໂຮນເຊັນເຕີ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນຂອງຜູ້ຖືຮຸ້ນ
ສຳລັບ 6 ເດືອນສິ້ນສຸດ ວັນທີ 30 ມີຖຸນາ 2016 (ທີ່ບທວນຄືນ)

	ບັດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ລົ້ຖ້າແບ່ງປັນ ກີບ	ຜົດດ່ຽງຈາກການ ແປງຄ່າເອກະສານ ລາຍງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2015 (ກວດສອບ)		500.000.000	-	250.000.000	-	136.557.548.375	(225.706.519)	137.081.841.856
ກຳໄລສຸດທິພາຍໃນປີ		-	-	-	-	12.185.834.839	-	12.185.834.839
ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	(3.193.137.722)	(3.193.137.722)
ຍອດເຫຼືອໃນວັນທີ 30 ມີຖຸນາ 2015 (ທີ່ບທວນຄືນ)		500.000.000	-	250.000.000	-	148.743.383.214	(3.418.844.241)	146.074.538.973
ຍອດຍົກມາ ວັນທີ 1 ມັງກອນ 2016 (ກວດສອບ)		330.000.000.000	24.735.724.722	2.092.819.578	1.842.819.578	151.300.105.001	(44.907.015.340)	465.064.453.538
ສຳຮອງເງິນຕາມກົດໝາຍ		-	-	442.597.228	-	(442.597.228)	-	-
ສຳຮອງເງິນອື່ນໆ		-	-	-	442.597.228	(442.597.228)	-	-
ກຳໄລສຸດທິພາຍໃນປີ		-	-	-	-	4.425.972.281	-	4.425.972.281
ຈ່າຍເງິນປັນຜົນ	11	-	-	-	-	(7.303.672.340)	-	(7.303.672.340)
ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	9.229.475.549	9.229.475.549
ຍອດເຫຼືອໃນວັນທີ 31 ມີນາ 2016 (ທີ່ບທວນຄືນ)		330.000.000.000	24.735.724.722	2.535.416.806	2.285.416.806	147.537.210.486	(35.677.539.791)	471.416.229.029

ວິດາພາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການ

	ບົດອະທິບາຍ	ທີ່ບໍ່ໄດ້ກວດສອບ 30 ມິຖຸນາ 2016 ກີບ	ທີ່ບໍ່ໄດ້ກວດສອບ 30 ມິຖຸນາ 2015 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ ສຳລັບຮອບໄລຍະເວລາ		5.068.937.526	12.506.897.747
ການດັດແກ້ຈາກກຳໄລສຸດທິໄປເປັນເງິນສົດສຸດທິ			
ຄ່າຫຼຸ້ຍຫ້ຽນ	7	2.494.708.300	2.128.778.352
ຜົດຕ່ຽງຈາກການແປງຄ່າ ເງິນຕາຕ່າງປະເທດ		742.475.946	(695.346.958)
ສຳຮອງເຄື່ອງໃນສາງ		(4.715.733.110)	1.016.467.608
ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ .		1.026.331.501	-
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງເງິນທຶນໝຸນວຽນ		4.616.720.163	14.956.796.749
ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(14.177.533.170)	(4.839.932.136)
- ເຄື່ອງໃນສາງ		(20.883.981.799)	2.347.356.027
- ຊັບສິນໝຸນວຽນອື່ນໆ		(943.641.607)	1.787.741.942
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		6.134.259.912	(7.627.474.318)
- ໜີ້ສິນໝຸນວຽນອື່ນໆ		1.548.737.916	(8.053.704.447)
ກະແສເງິນສົດທີ່ເກີດຈາກການດຳເນີນງານ		(23.705.438.585)	(1.429.216.183)
ອາກອນກຳໄລທີ່ຕ້ອງຈ່າຍ		(4.171.949.502)	(48.390.000)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		(27.877.388.087)	(1.477.606.183)
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຊື້ຊັບສິນບັດຄົງທີ		(4.240.484.038)	(689.772.957)
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(4.240.484.038)	(689.772.957)
ກະແສເງິນສົດຈາກກິດຈະກຳການເງິນ			
ລາຍຮັບຈາກເງິນກູ້ຢືມໄລຍະສັ້ນ		-	1.219.476.387
ການຊຳລະເງິນຄືນທີ່ເປີດເກີນບັນຊີທະນາຄານ		-	(1.452.972.060)
ການຊຳລະຄືນຂອງເງິນກູ້ຢືມໄລຍະສັ້ນ	9	(147.005.833)	(20.324.605)
ຈ່າຍດອກເບ້ຍ		(39.667.981)	(198.728.000)
ຈ່າຍເງິນປັນຜົນ	11	(7.303.672.340)	-
ເງິນສົດສຸດທິຈາກກິດຈະກຳທາງການເງິນ		(7.490.346.154)	(452.548.278)
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(39.608.218.279)	(2.619.927.418)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		96.575.616.427	21.527.701.343
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		1.296.957.190	361.069.314
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ		**58.264.355.338**	**19.268.843.239**
ລາຍການບໍ່ແມ່ນເງິນສົດ			
ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຄົງທີ		1.436.491.751	98.616.738.090

ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດຕານາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 09 ກັນຍາ 2016

1 ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ຊື່ເກົ່າແມ່ນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ) ເປັນບໍລິສັດ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນ ສຳລັບການກໍ່ສ້າງ, ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງ ໃຫ້ກັບທຸລະກິດຂາຍຍ່ອຍ.

ມີສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະຍັງມີສາຂາ 3 ສາຂາຢູ່ໃນນະຄອນຫຼວງວຽງຈັນເຊັ່ນ: ທົ່ງຂັນຄຳ, ສີໄຄ, ແລະ ທົ່ງຕຸມ.

ເອກະສານລາຍງານການເງິນກາງປີ ສະບັບນີ້ໄດ້ຜ່ານອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 9 ກັນຍາ 2016.

ເອກະສານລາຍງານການງານສະບັບນີ້ໄດ້ຖືກທົບທວນຄືນ ແຕ່ບໍ່ໄດ້ກວດສອບ.

ສຳລັບໂຄງຮ່າງຂອງບົດລາຍງານທາງດ້ານການເງິນແມ່ນໄດ້ຖືກກະກຽມໂດຍອີງຕາມຂໍ້ກຳນົດເລກທີ 017/ຄຄຊ (LSCO) ເຊິ່ງໄດ້ຖືກຕີພິມໂດຍ ຫ້ອງການຄຸ້ມຄອງຕະຫລາດຫລັກຊັບລາວ ("LSCO") ລົງວັນທີ 22 ຕຸລາ 2015 ເພື່ອກຳນົດ ຈຸດປະສົງໃຫມ່ສຳລັບ ສ.ປ.ປ ລາວ. ສະນັ້ນ, ການກະກຽມບົດລາຍງານທາງດ້ານການເງິນ ອາດຈະບໍ່ເປັນໄປຕາມຫລັກການ ສາກົນລວມທັງການທີ່ບໍ່ມີຂໍ້ມູນປຽບທຽບໃນບາງພາກສ່ວນ.

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບວິທີການບັນຊີຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2015. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບສະຫຼຸບຊັບສິມບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ ແລະ ໃບລາຍງານ ກະແສເງິນສົດ) ແມ່ນເປັນໄປຕາມກົດລະບຽບການເປີດເຜີຍແລະລາຍງ່ານເລກທີ 007/SCEO, ລົງວັນທີ 3 ເມສາ 2014 ອອກໂດຍຄະນະຄຸ້ມຄອງຫຼັກຊັບ

ເອກະສານລາຍງານການເງິນ 6 ເດືອນຕົ້ນປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2015.

ລາຍຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ທີ່ເກີດຂຶ້ນໃນຮອບໄລຍະປີການບັນຊີ ຈະຖືກປະມານການ ແລະບັນທຶກເປັນລາຍຈ່າຍລໍຖ້າ ຕັດຈ່າຍໃນເອກະສານລາຍງານການເງິນກາງປີ ກໍຕໍ່ເມື່ອລາຍຈ່າຍດັ່ງກ່າວມີຄວາມເໝາະສົມທີ່ຈະປະມານການ ຫລືເໝາະສົມທີ່ ຈະເລື່ອນການຮັບຮູ້ລາຍຈ່າຍດັ່ງກ່າວໄປບັນທຶກເມື່ອສິ້ນສຸດຮອບໄລຍະປີການບັນຊີ

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ໃນ ສປປ ລາວ ຍັງບໍ່ທັນໄດ້ມີການອາງມາດຕະຖານບັນຊີອອກ. ມາດຕະຖານດ້ານການບັນຊີລາວ ແມ່ນກຳລັງມີການພັດທະນາ ພາຍໃຕ້ ກົມບັນຊີ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບບັນຊີ (LCPAA). ໃນປັດຈຸບັນ, ບັນດາ ບໍລິສັດ ໄດ້ ນຳໃຊ້ປຶ້ມຄູ່ມື ກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີ ທີ່ວາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມື ດັ່ງກ່າວ ໄດ້ວາງຂໍ້ ແນະນຳ ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມື ດັ່ງກ່າວ ແລະ ມາດຕະຖານ ສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສົມບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ, ຜົນປະໂຫຍດພະນັກງານ, ອາກອນລາຍໄດ້, ເຄື່ອງມືທາງດ້ານການເງິນ ແລະ ໃບລາຍງານກະແສເງິນສົດ ແລະ ຕົ້ນທຶນເງິນກູ້ຢືມ. ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງ ທີ່ສຳຄັນ ໂດຍທຽບຖານ ຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງ ມາດຕະຖານສາກົນ ດ້ານການລາຍງານ ການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂົງເຂດ.

3. ການຄາດຄະເນ

ການກະກຽມຂໍ້ມູນທາງການເງິນກາງປີ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານ ມີການຕັດສິນໃຈ, ການຄາດຄະເນ ແລະ ສົມມຸດຕິຖານທີ່ ມີຜົນກະທົບການນຳໃຊ້ນະໂຍບາຍການບັນຊີແລະປະລິມານການລາຍງານຂອງຊັບສິນແລະຫນີ້ສິນ, ລາຍຮັບ ແລະ ຄ່າໃຊ້ຈ່າຍ ຜົນທີ່ແທ້ຈິງອາດຈະແຕກຕ່າງຈາກທີ່ປະມານ.

ໃນການກະກຽມຂໍ້ມູນທາງການເງິນກາງປີນີ້ ຜູ້ບໍລິຫານໃຊ້ວິຈາລະນະຍານໃນການເລືອກໃຊ້ນະໂຍບາຍບັນຊີ ແລະ ເລືອກ ໃຊ້ຂໍ້ມູນທີ່ຈະໃຊ້ເຂົ້າໃນການປະມານການ ການໃຊ້ວິຈາລະນະຍານດັ່ງກ່າວເປັນວິທີການດຽວກັນກັບວິທີທີ່ໃຊ້ໃນການເຮັດ ງົບການເງິນສຳຫລັບປີສິ້ນສຸດວັນທີ 31 ທັນວາ 2015.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ເງິນສົດໃນມື	103.948.038	725.031.708
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	58.160.407.300	95.850.584.719
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	58.264.355.338	96.575.616.427

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງ ພາຍໃນປະເທດໃນ ປະກອບດ້ວຍ 3 ສະກຸນເງິນ ໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ.

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ໜີ້ຕ້ອງຮັບການຄ້າ	21.441.482.128	19.491.904.378
ຫັກ ສຳຮອງໜີ້ຕ້ອງຮັບຈາກລູກຄ້າ	(3.173.446.609)	(2.147.115.108)
ໜີ້ຕ້ອງຮັບການຄ້າ ສຸດທິ	18.268.035.519	17.344.789.270
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ (ປົດອະທິບາຍຂໍ້ 14)	23.811.679.654	11.071.087.192
ເງິນກູ້ຢືມພະນັກງານ	292.135.891	378.662.976
ໜີ້ຕ້ອງຮັບອື່ນໆ	174.252.257	-
	24.278.067.801	11.449.750.168
ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	42.546.103.320	28.794.539.438

ຍອດເຫຼືອລູກໜີ້ການຄ້າມີອາຍຸການດັ່ງຕໍ່ນີ້:

	ທີ່ບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ບໍ່ຄົບກຳນົດ	4.139.168.842	7.926.460.412
ເກີນກຳນົດ		
1 - 3 ເດືອນ	9.709.932.203	4.582.014.528
3 - 6 ເດືອນ	4.170.537.865	2.416.818.607
6 - 12 ເດືອນ	1.525.453.042	1.558.738.508
ເກີນ 12 ເດືອນ	1.896.390.177	3.007.872.323
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	21.441.482.128	19.491.904.378
ຫັກ ສຳຮອງໜີ້ຕ້ອງຮັບຈາກລູກຄ້າ	(3.173.446.609)	(2.147.115.108)
ໜີ້ຕ້ອງຮັບການຄ້າ ສຸດທິ	18.268.035.519	17.344.789.270

ສຳຮອງໜີ້ຕ້ອງຮັບຈາກລູກຄ້າຖືກຕັ້ງຈາກໜີ້ຕ້ອງຮັບທີ່ຄ້າງດົນກ່າວ 6 ເດືອນ ແລະ ຍັງບໍ່ສາມາດເກັບເງິນໄດ້ໃນມື້ທີ່ອອກບົດລາຍງານການເງິນສະບັບນີ້.

6 ສິນຄ້າໃນສາງ ສຸດທິ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ກະເບື້ອງ ແລະ ວັດສະດຸກໍ່ສ້າງ	28.436.531.435	22.721.725.069
ຜະລິດຕະພັນສີ ແລະ ສານເຄມີ	9.900.612.989	5.498.758.857
ເຄື່ອງສຸກະພັນ ແລະ ກອກນ້ຳ	15.257.279.907	13.914.988.868
ລິບ ແລະ ບັນໄດເລື່ອນ	31.163.029.538	23.145.909.483
ຫຼັງຄາ ແລະ ອຸປະກອນຕົບແຕ່ງ	1.301.625.217	3.046.465.581
ເຄື່ອງຄົວ	2.350.623.464	1.302.387.382
ອຸປະກອນໄຟຟ້າ ແລະ ເຄື່ອງມື	13.686.652.532	2.962.644.223
ໂຄງສ້າງ	1.575.864.495	3.679.663.075
ອື່ນໆ	2.360.344.486	9.364.339.155
ຫັກ: ຄ່າເຊື່ອມມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຈະໄດ້ຮັບ	(5.772.881.696)	(12.392.053.337)
ສິນຄ້າໃນສາງ ສຸດທິ	100.259.682.367	73.244.828.356

ຕົ້ນທຶນຂອງສິນຄ້າໃນສາງຖືກຮັບຮູ້ເປັນລາຍຈ່າຍ ແລະ ລວມຢູ່ໃນ 'ຕົ້ນທຶນການຂາຍ' ເປັນຈຳນວນເງິນ 124.440 ລ້ານ ກີບ (ໃນປີ 2015: 145.933 ລ້ານກີບ).

7. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ຍອດຍົກມາສຸດທິໃນບັນຊີ	320.523.942.056	197.249.169.325
ການເພີ່ມຂຶ້ນ	5.676.975.789	148.064.316.663
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	6.192.737.068	(16.250.005.998)
ຄ່າຫຼ້ຍຫ້ຽນ	(2.494.708.300)	(8.539.537.934)
ຍອດເຫຼືອມູນຄ່າຕາມບັນຊີສຸດທິ	329,898,946,613	320.523.942.056

ຍອດເພີ່ມຂຶ້ນໃນຊ່ວງລະຫວ່າງຮອບເວລາລາຍງານ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2016. ສ່ວນໃຫຍ່ ເຄື່ອງໃຊ້ ຫ້ອງການ ແລະ ໂປຣແກຼມ ຍອດເພີ່ມຂຶ້ນທັງໝົດ 5.677 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວທີ່ເປັນເງິນສົດ (ຊຳລະ ແລ້ວ) 4.241 ລ້ານກີບ ແລະ ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ (ຍັງບໍ່ໄດ້ຊຳລະ) 1.436 ລ້ານກີບ.

8. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ໜີ້ຕ້ອງສົ່ງການຄ້າ	24,514,196,601	24,867,145,659
ໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 14)	8,269,448,374	-
ຈຳນວນຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 14)	-	1,237,951,691
ລວມໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	32,783,644,975	26,105,097,350

9. ເງິນກູ້ຢືມຈາກສະຖາບັນການເງິນ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ໝູນວຽນ		
ເງິນກູ້ຢືມຈາກສະຖາບັນການເງິນ	252.010.000	252.957.748
ບໍ່ໝູນວຽນ		
ເງິນກູ້ຢືມຈາກສະຖາບັນການເງິນ	738.585.987	885.352.182
ລວມເງິນກູ້ຢືມຈາກສະຖາບັນການເງິນ	990.595.987	1.138.309.930

ລາຍການເຄື່ອນໄຫວເງິນກູ້ຢືມມີດັ່ງນີ້

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ຍອດຍົກມາ	1.138.309.930	-
ການເພີ່ມຂຶ້ນ	-	1.260.050.000
ການຊຳລະຄືນ	(147.005.833)	(126.005.000)
ດັດແກ້ການແປງຄ່າ	(708.110)	4.264.930
ຍອດເຫຼືອທ້າຍ	990.595.987	1.138.309.930

9. ເງິນກູ້ຢືມຈາກສະຖາບັນການເງິນ (ຕໍ່)

ເງິນກູ້ຢືມຈາກສະຖາບັນການເງິນມີກຳນົດຊຳລະຄືນເມື່ອທວງຖາມ ມີອັດຕາດອກເບ້ຍ 8.75% ຕໍ່ປີ.ໂດຍກູ້ຢືມໃນ ສະກຸນເງິນ ກີບ ຄ້ຳປະກັນໂດຍທີ່ດິນ ແລະ ອາຄານຂອງ ຜູ້ຖືຮຸ້ນ.

ໃນວັນທີ 14 ມິຖຸນາ 2016, ບໍລິສັດເຊັ້ນສັນຍາໃຫມ່ໃນການຂະຫຍາຍຂອບເຂດເງິນເບີກເກີນບັນຊີ ຈາກ 1.200 ລ້ານເປັນ 145 ລ້ານບາດ ກັບສະຖາບັນການເງິນຕ່າງປະເທດສາຂາໃນລາວໂດຍມີອັດຕາຖານ ແມ່ນ 4% ຕໍ່ປີສຳລັບ ການສະຫນັບສະຫນຸນການດຳເນີນງານ. ບໍລິສັດ ຂະຫຍາຍຂອບເຂດກຳນົດການປ່ອຍສິນເຊື່ອເງິນເບີກເກີນບັນຊີໂດຍ ມີດິນຂອງຜູ້ຖືຮຸ້ນເປັນຫຼັກຊັບຄ້ຳປະກັນ.

10. ສຳຮອງ

ສຳຮອງຕາມກົດໝາຍ

	ທົບທວນຄືນ 30 ມິຖຸນາ 2015 ກີບ	ກວດສອບ 31 ທັນວາ 2015 ກີບ
ຍອດຍົກມາ	2.092.819.578	250.000.000
ການເພີ່ມຂຶ້ນ	442.597.228	1.842.819.578
ຍອດເຫຼືອທ້າຍ	2.535.416.806	2.092.819.578

ເງິນສຳຮອງຕາມກົດໝາຍໄດ້ກຳນົດຕາມ ມາດຕາທີ 156 ໃນກົດໝາຍວິສາຫະກິດ ຂອງ ສປປ ລາວ. ບໍລິສັດໄດ້ຕັ້ງ ກຳນົດ 10% ສຳລັບເງິນສຳຮອງ ຂອງກຳໄລສຸດທິປະຈຳປີ ຖືກຕັ້ງໄວ້ເປັນສຳຮອງຕາມກົດໝາຍຈົນກ່ວາເງິນສຳຮອງ ດັ່ງກ່າວ ຈະຮອດ 50% ຂອງທຶນຈົດທະບຽນ.

ສຳຮອງອື່ນໆ

	ທົບທວນຄືນ 30 ມິຖຸນາ 2015 ກີບ	ກວດສອບ 31 ທັນວາ 2015 ກີບ
ຍອດຍົກມາ	1.842.819.578	-
ການເພີ່ມຂຶ້ນ	442.597.228	1.842.819.578
ຍອດເຫຼືອທ້າຍ	2.285.416.806	1.842.819.578

10. ສຳຮອງ (ຕໍ່)

ສຳຮອງອື່ນໆ

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມ ນະໂຍບາຍຂອງທາງ ບໍລິສັດ ທີ່ໄດຮັບການຈົດທະບຽນກັບ ກະຊວງການເງິນ ສປປ ລາວ ໃນວັນທີ 22 ກັນຍາ 2015. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

11. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນ ວິສາມັນ ໃນວັນທີ 22 ເມສາ 2016, ຜູ້ຖືຮຸ້ນໄດ້ອະນຸມັດມະຕິປະກາດຈ່າຍເງິນປັນຜົນຈາກ ກຳໄລສະສົມໄດ້ຈັດສັນ ຫຼັງຈາກສຳຮອງຕາມກົດໝາຍ ແລະ ການຈັດສັນສຳຮອງອື່ນໆຂອງກຳໄລສຸດທິ ວັນທີ 1 ມັງກອນ 2015 ເຖິງວັນທີ 31 ທັນວາ 2015 ໃນຈຳນວນ 45 ກີບ ຕໍ່ ຮຸ້ນ ເປັນເງິນ ຈຳນວນ 7.304 ລ້ານ ກີບ.

12. ລາຍຈ່າຍອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ໃນວັນທີ 1 ຕຸລາ 2012, ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ເພື່ອ ໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 24%. ຫຼັງຈາກໄດ້ລົງທະບຽນໃນຕະຫຼາດຫຼັກຊັບເປັນຕົ້ນໄປ, ບໍລິສັດ ຈະຕ້ອງຈ່າຍອາກອນກຳໄລ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 24% ນອກຈາກນີ້ ບໍລິສັດ ຍັງໄດ້ຮັບ ນະໂຍບາຍ ຫຼຸດອັດຕາອາກອນລາຍໄດ້ນັບແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບອີກ 5% ເປັນໄລຍະເວລາ 4 ປີ (ຈາກ ປີ 2015 ເຖິງ ປີ 2019) ໂດຍອີງຕາມດຳລັດຂອງປະທານປະເທດກ່ຽວກັບອາກອນລາຍໄດ້ຂອງ ບໍລິສັດ ໃນຕະຫຼາດ ຫຼັກຊັບ ເລກທີ 1/ປປທ, ລົງວັນທີ 28 ທັນວາ 2010.

ສຳລັບຮອບເວລາ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2016 ບໍລິສັດໄດ້ບັນທຶກອາກອນລາຍໄດ້ຄ້າງຈ່າຍ ໃນ ອັດຕາປັດຈຸບັນ 19% ຂອງກຳໄລສຸດທິ ຫຼັງຈາກໄດ້ຄັດແກ້ລາຍຈ່າຍທີ່ບໍ່ສາມາດຫັກໄດ້ ແລະ ການບັນທຶກອື່ນໆໃນ ກົດໝາຍວ່າດ້ວຍສ່ວຍສາອາກອນກ່ຽວກັບ ພື້ນຖານການຄ້າງຮັບຄ້າງຈ່າຍ ຈຳນວນ 642 ລ້ານກີບ.

13. ກຳໄລຕໍ່ຮຸ້ນ

ໃນວັນທີ 30 ມິຖຸນາ 2016 ລາຍຮັບຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການແບ່ງປັນກຳໄລສຸດທິຂອງຜູ້ຖືຮຸ້ນຂອງ ບໍລິສັດ ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

	ທົບທວນຄືນ 30 ມິຖຸນາ 2016 ກີບ
ຕົວສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ(ຮຸ້ນ)	165.000.000
ກຳໄລສຸດທິສຳລັບໄລຍະທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ)	4.425.972.281
ກຳໄລຕໍ່ຮຸ້ນ (ກີບ)	27

ເນື່ອງຈາກຕອນທີ່ບໍລິສັດຈົດທະບຽນ ລັດຖະບານຂອງ ສ ປ ປ ລາວບໍ່ໄດ້ກຳນົດໃຫ້ມີຂໍ້ມູນກ່ຽວກັບຈຳນວນຮຸ້ນ ແລະ ລາຄາຕໍ່ຮຸ້ນໃນໃບທະບຽນວິສາຫະກິດ ສະນັ້ນ,ຈຶ່ງບໍ່ສາມາດຄິດໄລ່ກຳໄລຕໍ່ຮຸ້ນສຳລັບເວລາ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2015.

14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍ ສື່ກາງ, ການຄວບຄຸມ, ຫຼື ແມ່ນຄວບຄຸມໂດຍ, ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ, ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດ ອື່ນໆທີ່ກ່ຽວຂ້ອງກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ, ໂດຍກົງຫຼືທາງອ້ອມ, ມີສິດໃນການລົງຄະແນນສຽງຂອງ ບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບ ບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງ ສາຍສຳພັນ ແລະບໍ່ພຽງ ແຕ່ຮູບແບບທາງດ້ານກົດໝາຍ.

ຈຳນວນ ແລະ ລັກສະນະຂອງຄວາມສຳຄັນຂອງລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ.

14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

14.1 ລາຍຮັບ ແລະ ລາຍຈ່າຍ

	ທົບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 30 ມິຖຸນາ 2015 ກີບ
ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	8.269.448.374	-
ລາຍຈ່າຍດອກເບ້ຍ	-	198.728.000
ຄ່າເຊົ່າ	473.862.900	440.985.000
	8.743.311.274	639.713.000

ໃນການຊື້ສິນຄ້າສ່ວນຫຼາຍແມ່ນຊື້ຈາກ ບໍລິສັດ ສະຫຍາມ ໂກຣໂບເຮົ້າ ມະຫາຊົນ ຈຳກັດ. ເຊິ່ງເປັນພາກສ່ວນທີ່ກ່ຽວຂ້ອງກັບບໍລິສັດ. ລາຍຈ່າຍຄ່າເຊົ່າແມ່ນສຳລັບດິນ ແລະ ອາຄານ ເຊົ່າຈາກຂາຮຸ້ນຫຼັກເພື່ອສະໜັບສະໜຸນການດຳເນີນງານ. ຄ່າເຊົ່າແມ່ນເປັນໄປຕາມລາຄາຕົກລົງເຫັນດີທັ້ງສອງຝ່າຍ (ປົດອະທິບາຍຂໍ້ 15).

14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

14.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ເງິນຈ່າຍລ່ວງໜ້າສຳລັບການກໍ່ສ້າງ (ປົດອະທິບາຍຂໍ້ 5)	23.811.679.653	11.071.087.192
ບິນຊີໜີ້ຕ້ອງສົ່ງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ປົດອະທິບາຍຂໍ້ 8)	8.269.448.374	-
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ (ປົດອະທິບາຍຂໍ້ 8)	-	1.237.951.691

ເງິນຈ່າຍລ່ວງໜ້າສຳລັບການກໍ່ສ້າງແມ່ນຈ່າຍເພື່ອການກໍ່ສ້າງສາຂາໃໝ່ທີ່ ບ້ານໂຊກໃຫຍ່, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ ເຊິ່ງບໍລິສັດໄດ້ຕົກລົງທີ່ຈະຊື້ອາຄານຂອງສາຂາເຫລົ່ານັ້ນ ກໍຕໍ່ເມື່ອອາຄານດັ່ງກ່າວກໍ່ສ້າງສຳເລັດແລ້ວ.

14.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານ ແມ່ນດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2016 ກີບ	ກວດສອບ 30 ມິຖຸນາ 2015 ກີບ
ສຳລັບ ໄລຍະສາມເດືອນທ້າຍ	387.000.000	-
ສຳລັບ ໄລຍະ ຫົກເດືອນທ້າຍ	774.000.000	-

ໃນລະຫວ່າງ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2015 ບໍ່ໄດ້ມີລາຍຈ່າຍເງິນເດືອນ ແລະ ລາຍຈ່າຍຜົນຕອບແທນອື່ນໆໃຫ້ຜູ້ບໍລິຫານ.

15. ພາລະຜູກພັນ ແລະ ການເຄື່ອນໄຫວທີ່ມີຄວາມສຳຄັນ

ພາລະຜູກພັນຄ່າເຊົ່າໃນການດຳເນີນງານ, ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້. ຊຶ່ງໄລຍະການໃຫ້ເຊົ່າແມ່ນ 2 ຫາ 3 ປີ, ແລະ ສ່ວນໃຫຍ່ຂອງສັນຍາເຊົ່ານີ້ແມ່ນສາມາດຕໍ່ໄດ້ເມື່ອສັນຍາເກົ່າໝົດ.

	30 ມິຖຸນາ 2016 ກີບ	31 ທັນວາ 2015 ກີບ
ບໍ່ເກີນ 1 ປີ	947.725.800	921.715.600
1 - 5 ປີ	2.487.463.200	2.791.538.000
ບໍ່ເກີນ 5 ປີ	165.873.600	158.982.400
ຍອດເຫຼືອທ້າຍ 30 ມິຖຸນາ 2016 - ທົບທວນຄືນ	3,601,062,600	3,872,236,000

16. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ

ການຄ້າຫຍາຍທຸລະກິດ

ໃນກອງປະຊຸມປະຈຳປີ 1/2016 ລົງວັນທີ 11 ມິນາ 2016, ສະພາບໍລິຫານໄດ້ອະນຸມັດການເພີ່ມສາຂາໃນ ເມືອງ ວຽງຈັນ, ແຂວງ ຄຳມ່ວນ, ແຂວງ ສະຫວັນນາເຂດ ແລະ ບໍລິຄຳໄຊ ເຊິ່ງລວມທັງໝົດມີ 5 ສາຂາ, ໜຶ່ງສາຂາຢູ່ທີ່ ປາກ ຊັນ, ປາກເຊ, ໂຊກໄຊ, ສະຫວັນນາເຂດ ແລະທ່າແຂກ. ກະຊວງ ອຸດສາຫະກຳ ແລະ ການຄ້າໄດ້ອະນຸມັດອອກໃບ ທະບຽນວິສາຫະກິດໃໝ່ໃຫ້ໃນວັນທີ 16 ສິງຫາ 2016

ການຂາຍສິດ ຜູ້ຈຳໜ່າຍ ລິບ ແລະ ບັນໃດເລື່ອນ ເປັນແບນຂອງ ບໍລິສັດ ມິຊູບິຊິ

ໃນເດືອນກໍລະກົດ 2015, ບໍລິສັດສົ່ງໜັງສືແຈ້ງການໄປຍັງ Mitsubishi Electric Corporation (Mitsubishi) ກ່ຽວກັບການປ່ຽນແປງຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ແຜນການແຍກກິດຈະການ ລິບ ແລະ ບັນໃດເລື່ອນອອກຈາກ ບໍລິສັດ. ບໍລິສັດໄດ້ຮັບການອະນຸມັດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ ຕະຫຼາດຫຼັກຊັບລາວ ເປັນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ໃນວັນທີ 11 ທັນວາ 2015 ແຕ່ວ່າຫາກໍ່ໄດ້ຮັບໜັງສືຕອບຮັບຈາກ Mitsubishi ວັນທີ 21 ມິຖຸນາ 2016. ໃນໜັງສືຕອບຮັບລະບຸວ່າ ບໍລິສັດຕ້ອງແຍກກິດຈະການ ລິບ ແລະ ບັນໃດ ເລື່ອນຍີ່ຫໍ້ Mitsubishi ອອກຈາກບໍລິສັດ ໂດຍການສ້າງຕັ້ງບໍລິສັດໃຫມ່ ເພື່ອຂາຍແຕ່ຍີ່ຫໍ້ Mitsubishi ເທົ່ານັ້ນ ເພາະ ເນື່ອງຈາກວ່າການທີ່ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດໄດ້ມີການປ່ຽນແປງທີ່ເປັນສາລະສຳຄັນນັ້ນ ຈະສົ່ງຜົນກະທົບ ຕໍ່ການຮັກສາຄວາມລັບທາງເທກໂນໂລຊີຂອງທີ່ Mitsubishi ທີ່ພວກເຂົາບໍ່ຕ້ອງການເປີດເຜີຍ

16. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ (ຕໍ່)

ການຂາຍສິດທິໃນການເປັນຕົວແທນຈຳໜ່າຍລົບ ແລະ ຂັ້ນໃດເລື່ອນ ຂອງ ບໍລິສັດ ມິຊູບິຊິ

ໃນປະຈຸບັນ, ຜູ້ບໍລິຫານກຳລັງເຈລະຈາກັບ Mitsubishi ກ່ຽວກັບ ຄວາມຮ່ວມມືທາງທຸລະກິດ ແລະເງື່ອນໄຂຂອງ ສັນຍາ. ຜູ້ບໍລິຫານເຊື່ອວ່າ ບໍລິສັດອາດຈະຍັງສາມາດຮັກສາສິດການເປັນຕົວແທນຈຳໜ່າຍ ແຕ່ບໍ່ແມ່ນສິດສຳລັບການ ເປັນຕົວແທນຕິດຕັ້ງການອອກແບບແລະການສ້ອມແປງແລະບຳລຸງຮັກສາ. ບໍລິສັດໄດ້ເຊັນສັນຍາຈ້າງທີ່ປຶກສາທາງ ດ້ານການເງິນເພື່ອປະເມີນລາຄາຂາຍຂອງຊັບສິນທີ່ກ່ຽວຂ້ອງ, ສຸດທ້າຍແລ້ວຫາກມີການຕົກລົງທີ່ຈະໂອນຂາຍສິນຊັບ ທີ່ກ່ຽວຂ້ອງ ແມ່ນຈະອີງຕາມພື້ນຖານການຄິດໄລ່ຕໍ່ໄປນີ້; 1) ມູນຄ່າຕາມບັນຊີ 2) ມູນຄ່າຕາມບັນຊີໄດ້ດັດແກ້ ແລະ 3) ສ່ວນຫລຸດກະແສເງິນສົດ. ບັນຫາເຫຼົ່ານີ້ລວມທັງຂໍ້ກຳນົດຂັ້ນສຸດທ້າຍ ແລະ ເງື່ອນໄຂຂອງການດຳເນີນທຸລະກຳນີ້ ຄາດວ່າຈະໄດ້ຂໍ້ສະຫຼຸບພາຍໃນໄຕມາດທີສີ່ຂອງປີ 2016.

ບໍລິສັດ ມີລາຍຮັບຈາກ ການຂາຍລົບ ແລະ ບັນໃດເລື່ອນ ຍີ່ຫໍ້ Mitsubishi ສຳລັບງວດຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2016 ເປັນ 7% ຂອງລາຍໄດ້ທັງໝົດ ແລະ ມີອັດຕາກຳໄລເບື້ອງຕົ້ນປະມານ 8%. ທຶນໝຸນວຽນຫຼັກໃນວັນ ທີ 30 ມິຖຸນາ 2016 ມີດັ່ງລຸ່ມນີ້:

	ບໍ່ໄດ້ກວດສອບ ວັນທີ 30 ມິຖຸນາ 2016 ກີບ
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	828,123,161
ເຄື່ອງໃນສາງ	30,586,041,914
ເງິນມັດຈຳຈາກລູກຄ້າ	20,653,393,708